# ບົດທີ 15

# ພະເຈົ້າຊົງບັນດົນໃຈຜູ້ຂຽນພະຄຳພີ

## ພາກປາຍ: ຄວາມແນ່ນອນບໍ່ມີຜິດ

*ມີບາງຄົນທີ່ບອກວ່າເຂົາເຈົ້າບັນຖືພະຄຳພີຢູ່ ແຕ່ທີ່ຈິງເຂົາບໍ່ເຊື່ອໝົດ ບາງຄົນຫາຄວາມວ່າເປັນຂອງຝັ່ງແຕ່ທີ່ຈິງພະເຍຊູເປັນຊາດອາຊີພາກຕາເວັນຕົກ ຫຼື ວ່າເປັນແຂກ ອິດສະລາເອນກໍວ່າໄດ້. ໃນບົດຮຽນນີ້ເຮົາຈະສຶກສາເລື່ອງຫຼັກຖານ 3 ຢ່າງທີ່ເຫັນດ້ວຍຕົວຈິງວ່າພະຄຳພີບໍ່ມີຜິດ. ຢ່າລືມອ້ອນວອນໃຫ້ພະເຈົ້າຊ່ອຍໃນການຮຽນ!*

**1** ເຮົາໄດ້ຮຽນຮູ້ແລ້ວເລື່ອງຫຼັກຖານ 2 ຢ່າງວ່າ ພະເຈົ້າໄດ້ບັນດົນໃຈຜູ້ທີ່ເຫັນເຫດການຂຽນບັນທຶກໄວ້ເປັນພະຄຳພີ. ຫຼັກຖານ 2 ຢ່າງນັ້ນຄື:

ກ. ພະຄຳພີເປັນອັນ _____________ ອັນ _____________ ກັນຕະຫຼອດ.

ຂ. ຄຳທຳນວາຍເລື່ອງພະ _________________ ທີ່ສຳເລັດແລ້ວ. (ຈົ່ງຕື່ມຄວາມທີ່ຂາດ)

**2** ຫຼັກຖານເຫຼົ່ານັ້ນເປັນຫຼັກຖານທີ່ເຫັນຂ້າງໃນພະຄຳພີ, ຖ້າມີຫຼັກຖານຄົບບໍລິບູນຈາກພາຍໃນກໍຕາມ ອາດຈະບໍ່ພໍໃຈ ເພື່ອບາງຄົນຢາກເຫັນຫຼັກຖານຈາກ _____________ ນອກ. (ຈົ່ງຕື່ມຄວາມທີ່ຂາດ)

**3** ສ່ວນຄົນທີ່ສົງໄສວ່າພະຄຳພີອາດຈະບໍ່ຈິງ ເຂົາຢາກເຫັນຫຼັກຖານຈາກພາຍ ________ ແລະພາຍ _________ ອີກດ້ວຍ. ຫຼັກຖານພາຍນອກຈາກພະຄຳພີຄືຫຼັກຖານທີ່ເຫັນໄດ້ຕົວຈິງ.

**4** ໃນຫຼັກຖານ 4 ປະການຕໍ່ໄປນີ້ໃຫ້ທ່ານເລືອກເອົາຂໍ້ສະເພາະແຕ່ຫຼັກຖານພາຍນອກ.

ກ. ຜູ້ຂຸດຄົ້ນໂບຮານຄະດີພົບກຳແພງເມືອງເຢລິໂກ ວ່າຕົກໄປຂ້າງນອກ ເຊັ່ນດຽວກັບພະຄຳພີຂຽນບັນທຶກໄວ້.

ຂ. ຂ່າວປະເສີດທັງ 4 ເຫຼັ້ມບັນທຶກດ້ວຍຄວາມດຽວ.

ຄ. ຄຳທຳນວາຍໃນພະຄຳພີເດີມສຳເລັດໃນພະຄຳພີໃໝ່.

ງ. ມີນັກປະຫວັດສາດຊື່ວ່າ ໂຍຊີຟັດ ໃນສະໄໝພະຄຳພີໃໝ່ຊຶ່ງບັນທຶກເລື່ອງຕ່າງໆ ທີ່ເຂົ້າກັບພະຄຳພີ.

ຕອບ:

**1** *ກ. ອັນໜຶ່ງອັນດຽວກັນ ຂ. ພະເມຊີອາ*

**2** *ພາຍນອກ*

**3** *ໃນ...ນອກ*

**4** *ກ. ແລະ ງ. ຖືກ*

**5** ຜູ້ທີ່ລາຍງານເລື່ອງມາຈາກຫຼາຍປີກ່ອນອາດຈະລາຍງານບໍ່ແຈ້ງປານໃດ ເພາະເຂົາຈື່ຈຳບໍ່ໄດ້ຫມົດ. ບາງຄົນທີ່ນັກ ວິຈານວ່າພະຄຳພີບໍ່ຖືກ ຫາວ່າຜູ້ຂຽນບັນທຶກເລື່ອງໃນພະຄຳພີນັ້ນ ຂຽນໄວ້ຫຼັງຈາກຊີວິດຂອງພະເຢຊູ ຫຼາຍປີໂພດ. ຫມາຍຄວາມວ່າເຂົາເຊື່ອວ່າພະຄຳພີຖືກຫຼາຍ ຫຼື ບໍ່ຖືກ? ________________________________________

*ກ່ອນອື່ນໃຫ້ເຮົາພາກັນສັງເກດເບິ່ງວ່າ ພະຄຳພີຖືກຫຼືບໍ່*

ຫຼັກຖານທຳອິດຈາກພາຍນອກຄື:
ເຂົາຂຽນພະຄຳພີຫຼັງຈາກພະເຢຊູ ຂຶ້ນເມືອສະຫວັນບໍ່ເຖິງປານໃດ (ບໍ່ຫຼາຍປີ)



**6** ເຖິງວ່າຕົ້ນສະບັບທີ່ພວກອັກຄະສາວົກ ຫຼືອາຈານ ໂປໂລ ຂຽນ ເສຍຫາຍໄປແລ້ວກໍຕາມ ແຕ່ຍັງມີສະບັບທີ່ຜູ້ອື່ນກ່າຍເອົາໄວ້ຢູ່. ໃນສະໄຫມນັ້ນ ເຂົາເຄີຍໃຊ້ເຈັ້ຍຊະນິດຫນຶ່ງທີ່ເຮັດຈາກຕົ້ນອໍ້ ຂ້າງຂວານັ້ນ ມີຮູບໃບເຈັ້ຍຕົ້ນອໍ້ນັ້ນທີ່ເຂົາພົບແລ້ວໃນປະເທດ ເອຢິບ ເຈັ້ຍໃບນັ້ນມີຄຳຂຽນຈາກ 3 ຂໍ້ ໃນ ໂຢຮັນ ບົດ 18

ກ. ເຂົາພົບເຈັ້ຍໃບນັ້ນໃນປະເທດໃດ? ___________

ຂ. ມີຄຳເວົ້າຈາກພະຄຳພີບົດໃດ? _____________

**7** ນັກວິທະຍາສາດ ທີ່ກວດອາຍຸຂອງເຈັ້ຍໃບນັ້ນໃນປະເທດເອຢິບ, ເຂົາບອກວ່າເຈັ້ຍຕົ້ນອໍ້ນັ້ນ ມີອາຍຸຢູ່ຕັ້ງແຕ່ປະມານ ປີ ຄ.ສ 150 ພຸ້ນ. ໂຢຮັນເອງບໍ່ເຄີຍຢູ່ໃນປະເທດເອຢິບນີ້ ກໍຫມາຍຄວາມວ່າ ໂຢຮັນ ຂຽນຂ່າວປະເສີດໃນປະເທດປາແລັດສະຕິນ ແລ້ວຜູ້ອື່ນໆ ກ່າຍຕໍ່ກ່າຍເອົາ ຈຶ່ງແຜ່ອອກໄປເຖິງປະເທດເອຢິບ ແລະມີຄົນໃຊ້ເຈັ້ຍຕົ້ນອໍ້ກ່າຍ (ຊຶ່ງເປັນເຈັ້ຍຊະນິດຫນຶ່ງທີ່ມີໃຊ້ສະເພາະໃນປະເທດເອຢິບເທົ່ານັ້ນ) ດັ່ງນັ້ນ ປາກົດວ່າຄຳຂຽນບັນທຶກຂອງ ໂຢຮັນໄດ້ແຜ່ອອກໄປເຖິງເອຢິບ ໃນປີ ຄ.ສ 150 ດັ່ງນັ້ນ ຖາມວ່າຄຳຂຽນຂອງໂຢຮັນ ຜູ້ເປັນສາວົກຂອງພະອົງໄດ້ແຜ່ອອກໄປຢ່າງກວ້າງຂວາງແຕ່ເມື່ອໃດ? (ໃຫ້ເລືອກຫມາຍເອົາຂໍ້ທີ່ຖືກ)

ກ. ປະມານປີ ຄ.ສ. 150

ຂ. ຫຼັງຈາກປີ ຄ.ສ. 150

ຕອບ:

**5** *ເຂົາຫາວ່າບໍ່ຖືກປານໃດ*

**6** *ກ. ເອຢິບ ຂ. ໂຢຮັນ ບົດ 18*

**7** *ກ.ຖືກ*

**8** ບາດນີ້ເຮົາຈະພິຈາລະນາຢ່າງກວ້າງຂວາງກ່ຽວກັບຂ່າວປະເສີດໂຢຮັນເຫຼັ້ມດຽວ ມີບັນທຶກລາຍງານທີ່ໄວ້ໃຈໄດ້ຂຽນ ວ່າ ພວກຈັກກະພັດໂລມຈູດກຸງເຢລູຊາເລັມໃນປີ ຄ.ສ 70. ເຫດການນັ້ນເປັນເຫດການສຳຄັນຫຼາຍໃນສາຍຕາຂອງ ຄົນຢິວທຸກຄົນ. ຜູ້ບັນທຶກພະຄຳພີໃຫມ່ເປັນແຕ່ຄົນຢິວສ່ວນຫຼາຍຖ້າເຂົາຂຽນຫຼັງຈາກປີ ຄ.ສ 70 ເຂົາຈະວ່າຢ່າງໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເຂົາຈະບັນທຶກເລື່ອງນັ້ນຢ່າງແນ່ນອນ ເພາະເປັນເຫດການສຳຄັນຫຼາຍ

ຂ. ເຂົາອາດຈະບໍ່ເວົ້າເພາະເຫັນວ່າບໍ່ສຳຄັນ

**9** ໃຫ້ອ່ານ ມທ 24:1-2 ພະອົງບອກວ່າພະວິຫານຈະເປັນຢ່າງໃດ? ___________________

**10** ໃນເມື່ອຈັກກະພັດໂລມມາທຳລາຍກຸງເຢລູຊາເລັມໃນປີ ຄ.ສ 70 ເຂົາທຳລາຍພະວິຫານເຫມືອນກັນ ເຫຼືອແຕ່ຝາ ຂ້າງດຽວ. ຖ້າຄຳທຳນວາຍຂອງພະເຢຊູສຳເລັດກ່ອນຜູ້ຂຽນບັນທຶກພະຄຳພີເຂົາຈະວ່າຢ່າງໃດ? (ຫມາຍເອົາຂໍ້ທີ່ຖືກ)

ກ. ເຂົາຈະບໍ່ຍົກເລື່ອງເພື່ອບໍ່ໃຫ້ຊາດຢິວເຈັບໃຈ

ຂ. ເຂົາອາດຈະລືມແລ້ວ

ຄ. ເຂົາຈະບັນທຶກທັງຄຳທຳນວາຍແລະເລື່ອງທີ່ສຳເລັດດ້ວຍ

**11** ເບິ່ງຄືວ່າ ພະຄຳພີໄດ້ຖືກຂຽນໄວ້ເມື່ອເວລາໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ກ່ອນຈັກກະພັດໂລມມາທຳລາຍກຸງເຢລູຊາເລັມ (ທັງພະວິຫານດ້ວຍ)

ຂ. ຫຼັງຈາກຈັກກະພັດໂລມມາທຳລາຍກຸງເຢລູຊາເລັມ

**12** ນີ້ກໍສະແດງວ່າ ພະຄຳພີໃຫມ່ສ່ວນຫຼາຍໄດ້ຖືກຂຽນໄວ້ກ່ອນປີໃດ? ___________________

**13** ມາເຖິງນີ້ແລ້ວ ພວກເຮົາໄດ້ຄົ້ນຄວ້າເຖິງຫຼັກຖານພາຍນອກ 2 ປະການວ່າ ພະຄຳພີໃຫມ່ຖືກຂຽນໄວ້ຫຼັງຈາກເຫດການ ເຫຼົ່ານັ້ນໃນຊີວິດຂອງພະເຢຊູບໍ່ຫຼາຍປີ. ຫຼັກຖານສອງປະການນັ້ນຄື:

1. ພົບ 3 ຂໍ້ຈາກຂ່າວປະເສີດໂຢຮັນທີ່ຂຽນໃສ່ເຈັ້ຍຕົ້ນອໍ້.
2. ການທຳລາຍພະວິຫານໃນກຸງເຢລູຊາເລັມ.

ກ. ມີຫຼັກຖານອັນໃດ ທີ່ສະແດງວ່າຂ່າວປະເສີດໂຢຮັນ ແຜ່ອອກໄປເຖິງຄຣິສຕະຈັກໃນປະເທດເອຢິບ ປະມານປີ ຄ.ສ. 150? ______________________________________

ຂ. ມີອັນໃດສະແດງວ່າພະຄຳພີໃຫມ່ສ່ວນຫຼາຍຖືກຂຽນໄວ້ປະມານປີ ຄ.ສ 70? ________

ຕອບ:

**8** *ກ. ຖືກ*

**9** *ພະວິຫານຈະຖືກທຳລາຍ*

**10** *ຄ. ຖືກ*

**11** *ກ. ຖືກ*

**12** *ປີ ຄ.ສ 70*

**13** *ກ. ທີ່ພົບໃບເຈັ້ຍຕນອໍ້ໃນເອຢິບ* *ຂ. ການທຳລາຍພະວິຫານໃນກຸງເຢລູຊາເລັມ*

**14** ພະເຢຊູຖືກຄຶງໄວ້ທີ່ໄມ້ກາງແຂນປະມານປີ ຄ.ສ 30 ສະແດງວ່າພະຄຳພີໃຫມ່ສ່ວນຫຼາຍຂຽນຄົບຖ້ວນແລ້ວປະມານ ຈັກປີຫຼັງຈາກພະອົງສະເດັດສູ່ສະຫວັນ? ____________________

**15** ຖ້າພະຄຳພີຖືກຂຽນໄວ້ຄົບຖ້ວນ 40 ປີ, ຫຼັງຈາກພະເຢຊູຕາຍແລ້ວຄືນຂຶ້ນມາອີກ ຈະມີຄົນທີ່ເຫັນກັບຕາທີ່ຍັງບໍ່ຕາຍ ເຫຼືອຢູ່ບໍ່? ແນ່ນອນ ຍັງມີຫຼາຍຄົນທີ່ເຫັນເຫດການເຫຼົ່ານັ້ນກັບຕາຍັງມີຊີວິດຢູ່, ຖ້າຜູ້ບັນທຶກພະຄຳພີນັ້ນລາຍງານ ເລື່ອງບໍ່ຈິງຈະເປັນຢ່າງໃດ?
(ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ປະຊາຊົນຈະບໍ່ສັງເກດເລີຍ

ຂ. ປະຊາຊົນຈະຮູ້ວ່າເປັນຄວາມບໍ່ຈິງ

**16** ໃຫ້ເຮົາຍົກຕົວຢ່າງຈາກພາຍໃນພະຄຳພີ, ຈົ່ງເປີດອ່ານ I ກລທ ບົດ 15 ແລ້ວຫົວເລື່ອງ ບົດ 15:1-11 ນັ້ນຄືຫຍັງ? ________________________________________________

**17** ນັກຄົ້ນຄວ້າພະຄຳພີເຊື່ອວ່າ ໂກລິນໂທສະບັບຕົ້ນ ຖືກຂຽນໄວ້ລະຫວ່າງປີ ຄ.ສ 52-55 ເປັນເວລາ 25 ປີຫຼັງຈາກ ພະອົງຕາຍ. ໃຫ້ທ່ານອ່ານ I ໂກລິນໂທ 15:6 ດີໆ

ກ. ພະອົງປາກົດຕົວຕໍ່ຈັກຄົນຫຼັງຈາກຄືນພະຊົນ? ______________________________

ຂ. ລອງກະເບິ່ງວ່າ ຕໍ່ໄປອີກ 25 ປີພວກເຂົາຍັງມີຊີວິດຢູ່ສ່ວນຫຼາຍ ຫຼືບໍ່ຢູ່? ____________

**18** ຖ້າອາຈານໂປໂລຈະລາຍງານເລື່ອງບໍ່ຈິງ ຄົນເຫຼົ່ານັ້ນຈະເປັນຢ່າງໃດ?
(ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ເຂົາຈະສັງເກດບໍ່ຮູ້

ຂ. ຄົນເຫຼົ່ານັ້ນສ່ວນຫຼາຍຈະຮູ້ວ່າບໍ່ຈິງ

ຄ. ນ້ອຍຄົນຈະຮູ້ວ່າບໍ່ຈິງ

**19** I ໂກລິນໂທ ເປັນເຫຼັ້ມຫນຶ່ງໃນຫມູ່ທຳອິດ ຫຼັງຈາກພະເຢຊູຕາຍແລ້ວຄືນຂຶ້ນມາຈາກຕາຍ ແຕ່ປາກົດວ່າພະຄຳພີໃຫມ່ ສ່ວນຫຼາຍສຳເລັດກ່ອນປີ ຄ.ສ 70 ຄືວ່າການບັນທຶກເລື່ອງຊີວິດຂອງພະເຢຊູສຳເລັດພາຍໃນ 40 ປີ ຫຼັງຈາກເຫດ ການເຫຼົ່ານັ້ນ. ຜູ້ຂຽນບັນທຶກພະຄຳພີໃຫມ່ຄົງຈະບໍ່ຜິດເພາະເຫດໃດ? (ຈົ່ງຕື່ມຄວາມທີ່ຂາດ) ເພາະມີ _________ ຄົນ ທີ່ _________ ເຫດການເຫຼົ່ານັ້ນກັບຕາທີ່ຍັງມີ ______________ ຢູ່ໃນເວລາມີຜູ້ຂຽນ ບັນທຶກລົງໃນພະຄຳພີ.

ຕອບ:

**14** *40 ປີ*

**15** *ຂ.ຖືກ*

**16** *ການທີ່ພະຄຣິດຊົງຄືນພະຊົນ*

**17** *ກ. 500 ກວ່າຄົນໃນເວລາດຽວກັນ* *ຂ. ຫຼາຍຄົນຍັງມີຊີວິດຢູ່*

**18** *ຂ.ຖືກ*

**19** *ຫຼາຍ…ເຫັນ…ຊີວິດ*

**20** ທວນຄືນ:

| <u>ຫຼັກຖານພາຍນອກ</u> | <u>ຄວາມໝາຍ</u> | <u>ເຫດທີ່ສຳຄັນ</u> |
|---|---|---|
| ໃບເຈ້ຍຕົ້ນອໍ້ທີ່ມີຄວາມຂຽນຈາກໂຢຮັນ 18 ບໍ່ມີໃຜບັນທຶກເລື່ອງການທຳລາຍເຢລູຊາເລັມ ໃນພະຄຳພີໃໝ່. | ຫຼັກຖານ 2 ປະການນັ້ນສະແດງວ່າເຂົາຂຽນພະຄຳພີໃໝ່ຫຼັງຈາກການຕາຍແລະຄືນຈາກຕາຍຂອງພະອົງດົນ ປານໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ.)<br>ກ. ບໍ່ຫຼາຍສິບປີ<br>ຂ. ຫຼາຍສິບ ຫຼາຍຮ້ອຍປີ | ເຂົາຈະບັນທຶກຜິດບໍ່ໄດ້ເພາະ ຜູ້ທີ່ເຫັນເຫດການເຫຼົ່ານັ້ນ ກັບຕາຍັງມີຊີວິດຢູ່.ໃນເວລາ ເຂົາກຳລັງຂຽນຢູ່ນັ້ນຈະມີຄົນເຫຼືອຫຼາຍປານໃດ? (ເລືອກ)<br>ຄ. ບໍ່ຫຼາຍແລ້ວ<br>ງ. ຍັງຫຼາຍຢູ່ |

ແຕ່ຍັງມີສິ່ງສຳຄັນອີກປະການໜຶ່ງກ່ຽວກັບຕົ້ນສະບັບນັ້ນຄື:

<u>ຂ່າວຈາກພະຄຳພີໃໝ່ມາຈາກຜູ້ທີ່ເຫັນກັບຕາຕົນເອງ.</u>

**21** ຜູ້ທີ່ຂຽນບັນທຶກໃນຄຳພີໃໝ່ນີ້ ມີແຕ່ຜູ້ທີ່ເຫັນກັບຕາຈຶ່ງມາລາຍງານ. ທຳມະດາເຮົາຈະໄວ້ໃຈກັບພວກໃດໄດ້ດີກວ່າ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ຜູ້ທີ່ເຫັນກັບຕາຕົນເອງເຂົາຈຶ່ງຂຽນລົງ

ຂ. ຜູ້ທີ່ຂຽນລົງຈາກເລື່ອງທີ່ຜູ້ອື່ນເຫຼົ່າໃຫ້ຟັງ

**22** ໃຫ້ທ່ານອ່ານ I ຢຮ 1:2 ຜູ້ທີ່ບັນທຶກ Iໂຢຮັນ ນັ້ນເປັນຢ່າງໃດ? ຜູ້ຂຽນນັ້ນເປັນຜູ້ທີ່ເຫັນ ຫຼືແມ່ນແຕ່ເພິ່ນຟັງ ຈາກຄຳພະຍານຂອງຜູ້ອື່ນແລ້ວຂຽນ? ________________________

**23** ມີສາດສະໜາຈານໃນຍຸກນີ້ທີ່ຂຽນດັ່ງຕໍ່ໄປນີ້ວ່າ:

ກ. ນັກປະຫວັດສະໜາໃນສະໄໝອັກຄະສາວົກຂອງພະເຢຊູຄຣິດຮູ້ຈັກດີວ່າ ຄຳພະຍານໃກ້ສິດມີຄ່າ. ເຂົາຂຽນຫຼາຍ ເທື່ອຕໍ່ຫຼາຍທີວ່າ “ຝ່າຍເຮົາເປັນພະຍານໃນເລື່ອງນີ້”.

ຂ. ເພິ່ນບອກວ່າ “ບາງຄົນອາດນຶກວ່າ ຖ້າອັກຄະສາວົກນັ້ນຂຽນບັນທຶກບໍ່ຖືກບໍ່ມີໃຜຈະຕິໄດ້ ແຕ່ຄົນຜູ້ອື່ນທີ່ເຫັນເຫດ ການແລ້ວຍັງຈື່ຈຳໄດ້ມີຢູ່ເປັນຮ້ອຍໆ ຄົນ”. ໃນຄຳເວົ້າ 2 ປະໂຫຍກນັ້ນອັນໃດເຂົ້າກັບ I ຢຮ 1:2? ________________________________

ອັນໃດເຂົ້າກັບ I ກລທ ບົດ 15 ທີ່ມີ 500 ກວ່າຄົນ? ________________________

ຕອບ:

***20*** *ກ. ແລະ ງ.ຖືກ*

***21*** *ກ.ຖືກ*

***22*** *ຜູ້ຂຽນເອງເຫັນກ່ອນ*

***23*** *I ຢຮ 1:2 ຖືກກັບ ຂໍ້ ກ. I ກລທ ບົດ 15 ຖືກກັບ ຂໍ້ ຂ.*

**24** ໃນພະຄຳພີມີຢູ່ບາງເທື່ອທີ່ຜູ້ຂຽນບັນທຶກບໍ່ໄດ້ເຫັນເຫດການກັບຕາ ແຕ່ວ່າເພິ່ນເອົາແຕ່ຄວາມຈາກຜູ້ທີ່ເຫັນກັບຕາ ໂດຍກົງ. ຍົກຕົວຢ່າງ: ມາລະໂກບໍ່ແມ່ນອັກຄະສາວົກທີ່ເດີນທາງກັບພະເຍຊູ ແຕ່ເພິ່ນຢູ່ໃກ້ຊິດກັບເປໂຕສະເພາະ ເຮົາ ຈຶ່ງຖືໄດ້ວ່າ ມາລະໂກເປັນຜູ້ທີ່ຂຽນເລື່ອງທີ່ເປໂຕກ່າວໃຫ້. ດັ່ງນັ້ນເຖິງວ່າ ມາລະໂກບໍ່ໄດ້ເຫັນກັບຕາບາງປະການ ກໍຕາມ ແຕ່ເພິ່ນລາຍງານເລື່ອງຈາກຜູ້ທີ່ເຫັນກັບຕາບໍ່? ________________________________________

**25** ຖ້າຜູ້ບັນທຶກເລື່ອງຊີວິດຂອງພະເຢຊູຂຽນຄວາມບໍ່ຖືກຕ້ອງລິງ ມີຄົນໃດຈະມາຕິຕຽນໄດ້?

________________________________________

**26** ຜູ້ບັນທຶກພະຄຳພີອີງອາໄສຄວາມພະຍານຢ່າງໃດ? ________________________

*ເຮົາເວົ້າມາແລ້ວວ່າ ໜັງສືຕົ້ນສະບັບທີ່ຂຽນດ້ວຍມືບໍ່ມີແລ້ວ ໃນສະໄໝນັ້ນບໍ່ມີເຄື່ອງພິມດີດ ຜູ້ທີ່ກ່າຍເອົາກໍອາດຈະ ປ່ຽນແປງຫຼາຍບໍ່ແມ່ນຫຼື! ເຮົາຈະຮູ້ຢ່າງໃດວ່າພະຄຳພີທີ່ເຮົາກຳໃນມືເປັນພາສາລາວນີ້ເປັນອັນດຽວກັບຕົ້ນສະບັບນັ້ນ?*

<u>ພະຄຳພີທີ່ເຮົາມີຢູ່ໃນຍຸກນີ້ມີຄວາມສອນບໍ່ຜິດກັບຕົ້ນສະບັບ</u>

**27** ເຂົາຂຽນພະຄຳພີຕົ້ນສະບັບໃນສະໄໝທີ່ສາວົກຂອງພະເຢຊູຍັງບໍ່ໄດ້ຕາຍເທື່ອ ແຕ່ວ່າຕົ້ນສະບັບເຫຼົ່ານັ້ນຫາຍໄປ ແລ້ວ. ໃນສະໄໝນັ້ນເຂົາບໍ່ມີເຄື່ອງພິມດີດບໍ່ມີເຄື່ອງຖ່າຍເອກະສານ. ຜູ້ໃດຕ້ອງການອີກສະບັບໜຶ່ງຕ້ອງຈົດກ່າຍເອົາດ້ວຍມືຈຶ່ງໄດ້ ແຕ່ເປັນຢ່າງໃດກໍຕາມສະບັບທີ່ຍັງເຫຼືອໃນຍຸກນີ້ຍັງມີຄວາມສອນບໍ່ຜິດກັນກັບສະບັບຕົ້ນ. ເຂົາຂຽນພະຄຳພີໃໝ່ຕົ້ນສະບັບໃນພາສາໃດ? ________________________________________

ຕອບ:

**24** *ຈາກຜູ້ທີ່ເຫັນກັບຕາ*

**25** *ຍັງມີຫຼາຍຮ້ອຍຄົນທີ່ເຫັນກັບຕາ*

**26** *ອີງອາໄສຄວາມພະຍານໃກ້ຊິດ ຫຼື ເຫັນກັບຕາ*

**27** *ພາສາກະລີກ*

**28** ຖ້າເຮົາສົມທຽບກັບນັກປາດໃນສະໄຫມ 2000 ປີກ່ອນນັ້ນ ຜູ້ຄົ້ນຄວ້າ ຫຼືສາດສະຫນາຈານ ຫາກໄດ້ພົບແບບສະບັບທີ່ ເຂົາຂຽນມາ ສາມ ສີ່ ຫ້າສະບັບທີ່ກ່າຍເອົາ ເຂົາກໍພໍໃຈວ່າມີແບບພໍແລ້ວ. ແຕ່ສໍາລັບຜູ້ຂຽນບັນທຶກພະຄໍາພີນັ້ນແບບທີ່ ເຂົາກ່າຍເອົາມາຈາກຕົ້ນສະບັບຂອງພະຄໍາພີໃຫມ່ມີຢູ່ເປັນຮ້ອຍໆ ບາງຕອນພະຄໍາພີມີຢູ່ເຖິງພັນໆ ສະບັບ. ດັ່ງນັ້ນ ອັນໃດເປັນຕາໄວ້ໃຈໄດ້ດີກວ່າກັນ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ພະຄໍາພີໃຫມ່ ຂ. ຄໍາຂຽນຂອງນັກປາດຍຸກນັ້ນ

ນັກຄົ້ນຄວ້າວັນນະຄະດີເຫັນວ່າມີແບບທີ່ກ່າຍຂຽນຈາກຕົ້ນສະບັບຂອງນັກປາດອາດຈະບໍ່ເຖິງສິບສະບັບ ແຕ່ຍັງພໍໄວ້ໃຈໄດ້ວ່າຖືກຕ້ອງຢູ່. ຍິ່ງກວ່ານັ້ນພະຄໍາພີໃຫມ່ເປັນຕາໄວ້ໃຈເພາະເຫດໃດ? ____________________

*ບໍ່ແມ່ນພຽງແຕ່ຜູ້ບັນທຶກພະທໍາໃນຍຸກນັ້ນທີ່ລົງມືຂຽນເລື່ອງ ຍັງມີຜູ້ຂຽນເປັນຊາດໂລມແລະຊາດກະລີກ ອີກດ້ວຍ.*

**29** ຄວາມທີ່ຂຽນ 6 ປະການຕໍ່ໄປນີ້ ໃຫ້ທ່ານຂ້າອອກຄວາມໃດບໍ່ຈິງ

ກ. ວັນນະຄະດີຈາກສະໄຫມພະເຢຊູ ນັ້ນມີແຕ່ພະຄໍາພີໃຫມ່ຢ່າງດຽວ

ຂ. ແບບຂອງພະຄໍາພີໃຫມ່ຫຼາຍກວ່າແບບຂອງນັກປະພັນຄົນອື່ນ

ຄ. ທີ່ພະຄໍາພີມີຫຼາຍສະບັບເຫຼົ່ານັ້ນເຮັດໃຫ້ເຮົາຍິ່ງໄວ້ໃຈໄດ້

ງ. ພະທໍາທີ່ບັນທຶກເລື່ອງຊີວິດຂອງພະເຢຊູ ສໍາເລັດແລ້ວກ່ອນປີ ຄ.ສ 70

ຈ. ມີຫຼັກຖານວ່າພະຄໍາພີບໍ່ຜິດຈາກພາຍໃນພະຄໍາພີແລະພາຍນອກດ້ວຍ

ສ. ຄໍາຂຽນຂອງນັກປະຫວັດສາດເປັນຫຼັກຖານພາຍນອກຢ່າງຫນຶ່ງ

**30** ໃຫ້ທ່ານສະເຫນີຫຼັກຖານ 2 ປະການວ່າ ພະຄໍາພີໃຫມ່ສໍາເລັດສ່ວນຫຼາຍເມື່ອບໍ່ຫຼາຍສິບປີຫຼັງຈາກພະເຢຊູຕາຍແລ້ວ ຄືນຂຶ້ນມາອີກ.

ກ. ____________________

ຂ. ____________________

**31** ແມ່ນດ້ວຍເຫດໃດທີ່ເຮົາເຊື່ອວ່າ ສະບັບພະຄໍາພີທີ່ເຮົາມີຢູ່ໃນສະໄຫມນີ້ບໍ່ແຕກຕ່າງກັບຕົ້ນສະບັບ? ____________________

ຕອບ:

**28** *ກ.ຖືກ ເພາະມີຫຼາຍຮ້ອຍສະບັບທີ່ເຂົາກ່າຍເອົາຈາກຕົ້ນສະບັບ*

**29** *ຂີດຂ້າແຕ່ຂໍ້ ກ. ອອກ*

**30** *ກ. 3 ຂໍ້ຈາກ ຢຮ ບົດ 18 ທີ່ຂຽນໃສ່ເຈັ້ຍຕົ້ນອໍ້ໃນເອຢິບ ປີ ຄ.ສ. 150*

*ຂ. ພະຄໍາພີໃຫມ່ບໍ່ໄດ້ກ່າວເຖິງການທໍາລາຍກຸງເຢລູຊາເລັມໃນປີ ຄ.ສ. 70*

**31** *ເພາະເຂົາອາໄສພະຍານທີ່ເຫັນກັບຕາ ຫຼື ອີກຢ່າງຫນຶ່ງ ເພາະມີສະບັບທີ່ກ່າຍເອົາຈາກຕົ້ນສະບັບຫຼາຍ.*

**32** ທວນຄືນອີກ:

| ຫຼັກຖານພາຍນອກ | ຄວາມໝາຍ | ເຫດທີ່ສຳຄັນ |
|---|---|---|
| ມີຫຼາຍສະບັບທີ່ເຂົາກ່າຍ ເອົາຈາກຕົ້ນສະບັບມາ. | ແມ່ນເຫຼັ້ມໃດແດ່ທີ່ມີ ສະບັບກ່າຍຈາກຕົ້ນ ສະບັບຫຼາຍກວ່າ? (ເລືອກ)<br>ກ. ຄຳຂຽນນັກປາດ<br>ຂ. ພະທຳຄຳພີ | ດັ່ງນັ້ນແມ່ນເຫຼັ້ມໃດທີ່ເປັນ ຕາໄວ້ໃຈຫຼາຍກວ່າ? (ເລືອກ)<br>ຄ. ຄຳຂຽນນັກປາດ<br>ງ. ພະຄຳພີ |

*ມາເຖິງປະຈຸບັນນີ້ ເຮົາໄດ້ສຶກສາເລື່ອງຫຼັກຖານວ່າ ພະຄຳພີບໍ່ມີຜິດຈາກເອກະສານແລະວັນນະຄະດີ ແຕ່ຍັງມີຫຼັກ ຖານອີກຊະນິດໜຶ່ງຄື:*

<u>ບູຮານຄະດີ</u>

**33** ຫຼັກຖານດ້ານບູຮານຄະດີຈະປະກອບດ້ວຍຫຍັງ? (ໃຫ້ເລືອກ)

ກ. ວັນນະຄະດີ ຂ. ສິ່ງທີ່ຄົ້ນພົບ

**34** ສິ່ງທີ່ຄົ້ນພົບເຫຼົ່ານັ້ນທີ່ອຸດໜູນຄວາມຈິງໃນພະຄຳພີເປັນຫຼັກຖານໃດ? (ໃຫ້ເລືອກ)

ກ. ຫຼັກຖານພາຍໃນ ຂ. ຫຼັກຖານພາຍນອກ

**35** ວິຊາບູຮານຄະດີເປັນວິຊາທີ່ຄົ້ນຄວ້າເລື່ອງປະຫວັດສາດ ວັດທະນະທຳ ວັດຖຸເກົ່າແກ່ຂອງຄົນໃນສະໄໝບູຮານ (ຄືວັດ ພູໃນແຂວງຈຳປາສັກ) ເຂົາອາດຈະຄົ້ນພົບເມືອງ, ຮູບພະ, ຫລຸມຝັງສົບ, ຂອງໃຊ້ທີ່ເກົ່າແກ່ ໆລໆ ຈາກສະໄໝກ່ອນ. ການຄົ້ນຄວ້າດ້ານບູຮານຄະດີແມ່ນ... (ເລືອກເອົາຂໍ້ທີ່ຖືກ)

ກ. ວ່າດ້ວຍວັນນະຄະດີ

ຂ. ວັດຖຸບູຮານ, ບ້ານເມືອງ ຫຼື ວັດທີ່ເຂົາຂຸດຄົ້ນຫາຂອງເກົ່າແກ່

ຄ. ຫ້ອງສະໝຸດ

ຕອບ:

***32*** *ຂ. ແລະ ງ.ຖືກ*

***33*** *ຂ.ຖືກ*

***34*** *ຂ.ຖືກ*

***35*** *ຂ.ຖືກ*

**36** ຫຼັກຖານວ່າ ພະຄຳພີບໍ່ຜິດທີ່ມີຫຼັກຖານທາງບູຮານຄະດີມີຢູ່ເປັນຫຼາຍຮ້ອຍປະການ ຈົ່ງກວ່າ ນັກບູຮານຄະດີໃນພາກຕາ ເວັ້ນອອກກາງເຄີຍໃຊ້ພະຄຳພີເປັນປຶ້ມຄູ່ມືຊ່ວຍໃຫ້ເຂົາຫາສະຖານທີ່ໄດ້. (ໃຫ້ທ່ານເບິ່ງຮູບສອງໃບນີ້)



*ເດີ່ນຫີນໃນຜາສາດຫີນຂອງ ອັນໂທນີໂອ ໃນກຸງ ເຢລູຊາເລັມ ຄົ້ນພົບປີ 1933*




*ຄຳຈາລຶກຊື່ຂອງ ປີລາດ ແລະ ກາຍຊາຕິເບລີໂອ ໃສ່ໃນຫີນ. ຄົ້ນພົບໃນປີ 1961 ຢູ່ທີ່ກາຍຊາເລຍ.*

ກ. ສິ່ງທີ່ນັກບູຮານຄະດີຄົ້ນພົບໃນຮູບສອງໃບນັ້ນອັນໃດເປັນສະຖານທີ່? ____________

ຂ. ອັນໃດສະເໜີຊື່ສອງຄົນໃນພະຄຳພີ? ______________________________

**37** ສິ່ງທີ່ນັກບູຮານຄະດີຄົ້ນພົບທັງສອງປະການນັ້ນເປັນຫຼັກຖານວ່າພະຄຳພີເປັນຕາໄວ້ໃຈໄດ້ ເພາະອ້າງເຖິງຄົນແລະສະ ຖານທີ່ໃນພະຄຳພີ. (ໃຫ້ອ່ານ ຢຮ 19:13)

ກ. ປີລາດນັ່ງບັນລັງພິພາກສາພະຢຊູ ໃນບ່ອນທີ່ເອີ້ນວ່າຫຍັງ? ________________

ພະເຢຊູຖືກຄຶງໄວ້ທີ່ກຸງເຢລູຊາເລັມ ບັດນີ້ເຮົາຮູ້ຢູ່ແລ້ວວ່າ ພະອົງຖືກພິພາກສາໃນຜາສາດຂອງ ອັນໂທນີໂອ.

ຂ. ມີຫຼັກຖານໃນດ້ານບູຮານຄະດີວ່າ “ເດີ່ນປູຫີນ” ຈາກ ໂຢຮັນ 19:13 ມີຈິງເຮົາຈະເຊື່ອໄດ້ຢ່າງໃດ? ________________________________________________

**38** ບາດນີ້ເຮົາຈະຮັບພິຈາລະນາເລື່ອງປະການທີສອງນັ້ນ.

ກ. ຈົ່ງອ່ານ ລູກາ 3:1 ດີໆ ມີຫຼັກຖານໃດຈາກພາຍນອກພະຄຳພີວ່າສອງຄົນນັ້ນມີຈິງ? ___

________________________________________________

ຂ. ຫຼັກຖານນັ້ນອ້າງເຖິງຄົນ ຫຼື ອ້າງເຖິງສະຖານທີ່ໃນພະຄຳພີໃໝ່? ____________

ຕອບ:

**36** *ກ. ເດີ່ນຫີນໃນຜາສາດ ອັນໂທນີໂອ ຂ. ການຈາລຶກຊື່ເຂົາໃນຫີນ*

**37** *ກ. ເດີ່ນປູຫີນ ຂ. ນັກໂບຮານຄະດີຄົນພົບແລ້ວໃນປີ 1933*

**38** *ກ. ທີ່ເຂົາເຫັນຊື່ຂອງ ປີລາດ ແລະ ກາຍຊາຕິເບລີໂອ ຈາລຶກໄວ້ໃນຫີນ. ຂ. ຄົນ*

**39** ເຮົາໄດ້ເຫັນຕົວຢ່າງ 2 ປະການທີ່ນັກບູຮານຄະດີ ອຸດໜູນວ່າພະຄຳພີບໍ່ມີຜິດ. ນອກຈາກສອງປະການນັ້ນຍັງມີຫຼາຍ ສິ່ງຫຼາຍຢ່າງອີກດ້ວຍ. ໃນຕົວຢ່າງສອງປະການນັ້ນເວົ້າເຖິງອັນໃດ? (ຈົ່ງຂີດຂ້າອອກອັນທີ່ບໍ່ຖືກ)

ກ. ອ້າງເຖິງສະຖານທີ່ໃນພະຄຳພີ

ຂ. ອ້າງເຖິງຄົນໃນສະໄໝພະຄຳພີ

ຄ. ອ້າງເຖິງສັດໃນພະຄຳພີ

*ຢ່າລືມຕອບບົດເສັງທີ 40!*

ຕອບ:

***39*** *ຂ້າອອກແຕ່ຂໍ້ ຄ.*